# ຈຸດຕິດຕໍ່ ດຽວ

ລະບົບລາຍງານ ຈຸດຕິດຕໍ່ດຽວໃໝ່ຂອງເມືອງໃຫ້ບ່ອນດຽວໃນການລາຍງານບັນຫາຕ່າງໆທີ່ກ່ຽວຂ້ອງກັບສະຖານທີ່ຕັ້ງແຄ້ມພັກເຊົາໃນຕົວເມືອງໄດ້ຢ່າງງ່າຍດາຍ. ພວກເຮົາເຮັດວຽກໃນທົ່ວເຂດອຳນາດຕ່າງໆ ເພື່ອໃຫ້ການບໍລິການທີ່ຫຼາກຫຼາຍທີ່ອີງໃສ່ລາຍງານທີ່ທ່ານຍື່ນທາງອອນລາຍ. ລະບົບຖືກອອກແບບມາເພື່ອໃຫ້ການຕອບສະໜອງຢ່າງວ່ອງໄວຕໍ່ກັບການຮ້ອງຮຽນ ແລະ ຄວາມກັງວົນຕ່າງໆ ແລະ ຈະອະນຸຍາດໃຫ້ເມືອງລວມສູນຂະບວນການເກັບເອົາຂໍ້ມູນ.

---

**211info** — *The easiest way to find health and human services.*

| TEXT | DIAL | SEARCH |
| --- | --- | --- |
| zip to 898211 | 211 | 211info.org |

We can connect you with food and rental assistance, parenting resources, maternal and child health services, utility assistance, and much more.

**Free. Live. Confidential.**

Download on the App Store | Google play

---

**211info** — ວິທີທີ່ງ່າຍສຸດໃນການຊອກຫາການບໍລິການສຸຂະພາບ ແລະ ມະນຸດ.

| ສົ່ງຂໍ້ຄວາມ | ໂທ | ຄົ້ນຫາ |
| --- | --- | --- |
| ລະຫັດໄປສະນີຫາ 898211 | 211 | 211info.org |

ພວກເຮົາສາມາດເຊື່ອມຕໍ່ທ່ານກັບການຊ່ວຍເຫຼືອດ້ານອາຫານ ແລະ ຄ່າເຊົ່າ, ແຫຼ່ງຄວາມຊ່ວຍເຫຼືອດ້ານການລ້ຽງລູກ, ການບໍລິການສຸຂະພາບແມ່ ແລະ ເດັກ, ການຊ່ວຍເຫຼືອດ້ານສາທາລະນຸປະໂພກ ແລະ ອື່ນໆອີກຫຼາຍຢ່າງ.

**ຟຣີ, ສົດ. ເປັນຄວາມລັບ.**

Download on the App Store | Google play

---

# ຈຸດຕິດຕໍ່ ດຽວ

ລະບົບທີ່ຖືກອອກແບບມາເພື່ອເພີ່ມປະສິດທິພາບການບໍລິການໂດຍມີຈຸດປະສົງແນໃສ່ປັບປຸງສຸຂະພາບ ແລະ ຄວາມປອດໄພຂອງປະຊາຊົນ

*www.portlandoregon.gov/toolkit*

*www.portlandoregon.gov/campsite*

*Reportpdx@portlandoregon.gov*

*Phone: (503) 823-4000*

# ມັນເຮັດວຽກແນວໃດ

**ຈາກຄອມພິວເຕີຂອງທ່ານ, ໄປຫາ:**

***www.portlandoregon.gov/campsite***

ເມືອງໄດ້ສ້າງແບບຟອມອອນລາຍທີ່ ອະນຸຍາດໃຫ້ທ່ານ ສະໜອງຂໍ້ມູນກ່ຽວກັບກໍລະນີຂອງ:

- ພຶດຕິກຳທີ່ຮ້າຍກາດເກີນເຫດຊໍ້າຫຼາຍເທື່ອຈາກຜູ້ຕັ້ງແຄ້ມພັກເຊົາ (ການຂົ່ມຂູ່ທາງວາຈາໂດຍກົງ ຫຼື ການກະທຳທາງຮ່າງກາຍທີ່ມຸ້ງໝາຍຢ່າງຈະແຈ້ງທີ່ຈະຂົ່ມຂູ່ ເຊັ່ນວ່າ ໄລ່ຕາມ, ປະກົດຢູ່ຕໍ່ໜ້າ ຫຼື ຍົກກຳປັ້ນໃສ່. ໂທຫາ 9-1-1 ເພື່ອຂໍຄວາມຊ່ວຍເຫຼືອໃນທັນທີ ແລະ ປະກອບຂໍ້ມູນແບບຟອມນີ້ໃນພາຍຫຼັງ.)
- ການມຶນເມົາ ແລະ/ຫຼື ການໃຊ້ຢາເສບຕິດໃນທີ່ສາທາລະນະ (ອີກຄັ້ງ, ຖ້າມັນແມ່ນເຫດສຸກເສີນ, ກະລຸນາໂທຫາ 9-1-1.)
- ສະຖານທີ່ຕັ້ງແຄ້ມພັກເຊົາຂັດຂວາງເສັ້ນທາງສາທາລະນະ (ເຊັ່ນວ່າ ທາງຄົນຍ່າງ, ທາງຍ່າງ)
- ການໃຊ້ສະຖານທີ່ສາທາລະນະໃນທາງທີ່ຜິດ (ເຊັ່ນວ່າ ການໃຊ້ມັນເປັນຫ້ອງນໍ້າ)
- ໂຄງສ້າງຕ່າງໆ (ເຊັ່ນວ່າ ກະທ່ອມໝາເຫງນ, ບ່ອນຫຼິ້ນໄພ)
- ຖິ້ມຂີ້ເຫຍື້ອ ແລະ/ຫຼື ອັນຕະລາຍທາງຊີວະພາບຫຼາຍເກີນໄປ(ເຊັ່ນວ່າ ຊະແລັງທີ່ຖິ້ມຊະຊາຍ)
- ຄວາມເສຍຫາຍຕໍ່ກັບສິ່ງແວດລ້ອມ (ເຊັ່ນວ່າ ການຕັດຕົ້ນໄມ້ ຫຼື ງ່າໄມ້, ການຂຸດຄູເຂົ້າໄປໃນເນີນພູ ແລະ ອື່ນໆ)

ເມືອງໃຊ້ຂໍ້ມູນທີ່ທ່ານສະໜອງໃຫ້ເພື່ອແຈ້ງບອກໜ່ວຍງານທີ່ຮັບຜິດຊອບ ແລະ ດຳເນີນການໂຕ້ຕອບຢ່າງວ່ອງໄວ ແລະ ມີປະສິດທິພາບ.

ນອກນັ້ນທ່ານຍັງສາມາດເຮັດການລາຍງານໄດ້ໂດຍການໂທຫາເບີໂທແຈ້ງຂໍ້ມູນຂ່າວສານຂອງເມືອງ/ເຂດປົກຄອງ: (503) 823-4000, ເຊິ່ງຜູ້ຊ່ຽວຊານຝ່າຍຂໍ້ມູນຂ່າວສານ ແລະ ການນຳສົ່ງສາມາດຊ່ວຍທ່ານປະກອບການລາຍງານໄດ້.

ສຳລັບຂໍ້ມູນກ່ຽວກັບນະໂຍບາຍຂອງເມືອງກ່ຽວກັບການການຂາດບ່ອນຢູ່ອາໄສ ແລະ ທີ່ຢູ່ອາໄສ, ກະລຸນາເຂົ້າເບິ່ງ: *www.portlandoregon.gov/toolkit*



## ແອັບ PDX Reporter ໃນ ສະມາດໂຟນຂອງທ່ານ

ມີເວີຊັນເວັບ www.pdxreporter.org ໃຫ້ນຳໃຊ້ສຳລັບສະມາດໂຟນຂອງທ່ານແລ້ວ. ເວີຊັນໃໝ່ນີ້ອະນຸຍາດໃຫ້ພວກເຮົາອັບເດດແອັບໄດ້ງ່າຍກວ່າ ແລະ ເປັນປົກກະຕິກວ່າເພື່ອໃຫ້ມີປະສົບການໃຊ້ງານທີ່ດີກວ່າ. ພວກເຮົາສົ່ງເສີມໃຫ້ບຸກຄົນເຊົາໃຊ້ແອັບ PDX Reporter ເວີຊັນ iOS ແລະ Android ທີ່ເກົ່າກວ່າ ເພາະວ່າພວກມັນບໍ່ໄດ້ຮັບການອັບເດດບຳລຸງຮັກສາອີກຕໍ່ໄປແລ້ວ ແລະ ໃນສຸດທ້າຍຈະຖືກກຳຈັດຖິ້ມທັງໝົດ.

ເພື່ອສ້າງໄອຄອນສຳລັບແອັບໃໝ່ໃນໜ້າຈໍຫຼັກຂອງໂທລະສັບຂອງທ່ານ:

1) ເຂົ້າຫາ www.pdxreporter.org ໃນເວັບບຣາວເຊີຂອງໂທລະສັບຂອງທ່ານ.
2) ເຂົ້າສູ່ລະບົບໂດຍໃຊ້ຊື່ຜູ້ໃຊ້ ແລະ ລະຫັດຜ່ານດຽວກັນກັບທີ່ສ້າງຂຶ້ນສຳລັບເວັບໄຊຂອງເມືອງ.
3) ປັກໝຸດທາງລັດ (ໄອຄອນ) ໃສ່ໜ້າຈໍຫຼັກໂທລະສັບຂອງທ່ານເພື່ອເຂົ້າຫາແອັບອອນລາຍໄດ້ວ່ອງໄວກວ່າ.

ມີຄຳຖາມ, ຄຳຄິດເຫັນ, ຄວາມກັງວົນໃຈບໍ?

ອີເມວ

**ReportPDX@portlandoregon.gov**

# ເປົ້າໝາຍຂອງພວກເຮົາ

ເປົ້າໝາຍຂອງພວກເຮົາແມ່ນເພື່ອໃຫ້ລະບົບທີ່ຕອບສະໜອງຄວາມຕ້ອງການຂອງຊຸມຊົນພວກເຮົາ. ລະບົບຈຸດຕິດຕໍ່ດຽວຖືກອອກແບບມາເພື່ອເກັບເອົາທຸກບັນຫາກັງວົນໃຈທີ່ກ່ຽວຂ້ອງກັບການຕັ້ງແຄ້ມພັກເຊົາໃນເຂດຕົວເມືອງ. ມັນໃຫ້:

- ສ່ວນຕໍ່ປະສານທີ່ໃຊ້ງ່າຍ;
- ການໃຊ້ຊັບພະຍາກອນຂອງເມືອງທີ່ມີເປົ້າໝາຍກວ່າ;
- ການສື່ສານເປີດກວ້າງລະຫວ່າງທຸກພາກສ່ວນສຳຄັນ (ເຊັ່ນວ່າ ຝ່າຍບໍລິການສັງຄົມ, ການບໍລິການຈັດຫາທີ່ຢູ່ອາໄສ, ຕຳຫຼວດ, ສະມາຊິກຊຸມຊົນທົ່ວໄປ);
- ລະບົບຂໍ້ມູນຂ່າວສານດຽວ ແລະ ລວມສູນເພື່ອເຂົ້າໃຈ ແລະ ວິເຄາະວ່າບ່ອນໃດຕ້ອງການການບໍລິການຫຼາຍທີ່ສຸດ.

## ຈຸດຕິດຕໍ່ດຽວ

*www.pdxreporter.org*

*www.portlandoregon.gov/campsite*

*www.portlandoregon.gov/toolkit*

*ReportPDX@portlandoregon.gov*


**City of Portland**

1120 SW 5th Ave, Suite 1200

Portland, Oregon 97204-1998

Phone (503) 823-4000